# ຂົງເຂດ ແລະ ເງື່ອນໄຂ

## ເປັນທີ່ປຶກສາອາສາສະມັກ(ຊ່ວຍເຫຼືອລ້າ) ໃຫ້ແກ່ບັນດາ ສະມາຄົມ ແລະ ມູນນິທິທີ່ຕ້ອງການຄວາມຊ່ວຍເຫຼືອ ປີ 2025

### 1. ອະລຳພະບົດ

ອາສາສະມັກຊ່ວຍເຫຼືອລ້າ ໃນການເປັນທີ່ປຶກສາ ໃຫ້ກັບບັນດາສະມາຄົມ ແລະ ມູນນິທິປີ 2025 ນີ້ ເປັນແຜນງານນໍ້າໃຈອາສາໜຶ່ງ ທີ່ສ້າງຂຶ້ນ ດ້ວຍຈຸດປະສົງ ໃນການຊ່ວຍເຫຼືອລ້າ ໃຫ້ກັບ ສະມາຄົມ ແລະ ມູນນິທິ ທີ່ຕ້ອງການຄວາມຊ່ວຍເຫຼືອ ໃນການເສີມສ້າງ ຄວາມເຂັ້ມແຂງ ແລະ ການເຕີບໃຫຍ່ ໃຫ້ກັບອົງກອນ ເພື່ອສາມາດປະກອບສ່ວນ ເຂົ້າໃນການພັດທະນາປະເທດຊາດ ຕາມຂົງເຂດວຽກງານຂອງຕົນໄດ້ເປັນຢ່າງດີ. ເຊິ່ງການໃຫ້ຄຳປຶກສາ ຈະດຳເນີນໄປຫຼາຍຄັ້ງ ຕະຫຼອດປີ ຈົນສຳເລັດພາລະກິດທີ່ໄດ້ຕົກລົງກັນ ພາຍໃຕ້ຫົວຂໍ້ທີ່ທ່ານຄັດເລືອກດັ່ງລຸ່ມນີ້.

### 2. ຂົງເຂດໃຫ້ຄຳປຶກສາ

| ລ/ດ | ຫົວຂໍ້ | Topic |
|---|---|---|
| 1 | ສ້າງແຜນຍຸດທະສາດອົງກອນ | Developing Organization Strategy |
| 2 | ສ້າງນະໂຍບາຍຄຸ້ມຄອງບໍລິຫານ | Developing Management Policy and Procedure |
| 3 | ສ້າງນະໂຍບາຍຂົງເຂດວຽກງານ | Developing Focus Areas Policy |
| 4 | ສ້າງລະບົບການລະດົມທຶນ | Developing Resource Mobilization System |
| 5 | ສ້າງອົງກອນ ແລະ ການເຮັດໃຫ້ອົງກອນເຕີບໃຫຍ່ | Developing Organization and Growth |
| 6 | ສ້າງຄູ່ມືແນະນຳພະນັກງານ | Developing Standard Operation Procedure |
| 7 | ສ້າງລະບົບ ການເສີມສ້າງຄວາມອາດສາມາດໃຫ້ພະນັກງານ | Developing Staff Capacity Building System |
| 8 | ສ້າງລະບົບຄຸ້ມຄອງໂຄງການ | Developing Project Management System |
| 9 | ສ້າງເຄືອຂ່າຍຊຸມຊົນ ເພື່ອການປ່ຽນແປງທີ່ຍືນຍົງ | Developing Community Network and Sustainable Change |
| 10 | ສ້າງລະບົບການຕິດຕາມ ແລະ ປະເມີນຜົນ | Developing Monitoring and Evaluation System(MEAL) |
| 11 | ສ້າງລະບົບການສ້າງພາວະຜູ້ນຳ ແລະ ການຄຸ້ມຄອງບໍລິຫານອົງກອນ | Developing Leadership and Management Building System |
| 12 | ອື່ນໆ ນອກເໜືອຈາກນີ້ | And other topics as required |

### 3. ຜູ້ໃຫ້ຄຳປຶກສາ

ດຣ ສຸພິນ ໄຊຍະວົງ, ຈົບການສຶກສາ ປະລິນຍາຕີ ດ້ານການແພດ (Medical and Science) ປີ 1998 ຢູ່ມະຫາວິທະຍາໄລແພດສາດ, ນະຄອນຫຼວງວຽງຈັນ ແລະ ຈົບ ປະລິນຍາໂທ ດ້ານ ການສຶກສາພັດທະນາ (Development Studies) ປີ 2008, ຢູ່ມະຫາວິທະຍາໄລຕ່າງປະເທດ, ເຈເນວາ, ປະເທດສະວິດເຊີແລນ. ເຊິ່ງໄດ້ເຮັດວຽກ ໃນຂົງເຂດພັດທະນາມາ ນັບແຕ່ປີ 1999 ຈົນຮອດປະຈຸບັນ (>20 ປີ) ກັບຫຼາຍອົງກອນທີ່ເປັນ

INGOs, UN  ແລະ CSOs. ປະຈຸບັນ ດຳລົງຕຳແໜ່ງ ເປັນຜູ້ອຳນວຍການ ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ).

## 4. ວິທີການ

ໄລຍະທຳອິດ, ຜູ້ມຸ້ງຫວັງຈະຕ້ອງຕອບຄຳຖາມດັ່ງລຸ່ມນີ້:

1) ໃຫ້ທ່ານ ເລືອກໄດ້ ຫົວຂໍ້ດຽວ (ຕາມຫົວຂໍ້ຢູ່ໃນຕາຕະລາງ)  ຕາມຄວາມຈຳເປັນ ຂອງອົງກອນທ່ານ

   ຫົວຂໍ້ທີ່ເລືອກ ແມ່ນ…………………………………………………………………

2) ໃຫ້ທ່ານ ອະທິບາຍເຫດຜົນ ແລະ ຄວາມຈຳເປັນ ຍ້ອນຫຍັງທ່ານຈຶ່ງຢາກໄດ້ ທີ່ປຶກສາ ຫົວຂໍ້ດັ່ງກ່າວ?

   ເຫດຜົນ……………………………………………………………………………

3) ໃຫ້ທ່ານ ກຳນົດ ຊື່ເດືອນທີ່ທ່ານຄາດວ່າສະດວກ ມາຈັກ 3 ເດືອນ ເພື່ອທີ່ຈະສົນທະນາ ແລະ ປຶກສາກັນ ໃນຫົວຂໍ້ດັ່ງກ່າວ

   ເດືອນ ……………………………………………………………………………

ໄລຍະຕໍ່ມາ, ຜູ້ໃຫ້ຄຳປຶກສາ ຈະດຳເນີນການດັ່ງຕໍ່ໄປນີ້:

1) ເກັບລວບລວມ ຂໍ້ມູນ ຄວາມຕ້ອງການ ທັງໝົດ ແລະ ສ້າງເປັນແຜນ ໃຫ້ຄຳປຶກສາ ປີ 2025
2) ສອບຖາມຄືນ ແລະ ຢືນຢັນ ຕາຕະລາງ ວັນທີ ເວລາ ຮ່ວມກັນ
3) ດຳເນີນການໃຫ້ຄຳປຶກສາ ຕາມແຜນທີ່ວາງໄວ້ ໂດຍຜ່ານ ອອນລາຍ ແລະ ເຊິ່ງໜ້າ ແລ້ວແຕ່ເງື່ອນໄຂ.

## 5. ຄ່າທີ່ປຶກສາ

ດັ່ງທີ່ກ່າວແລ້ວ ນີ້ ແມ່ນວຽກອາສາ ສະນັ້ນ ການໃຫ້ຄຳປຶກສາຈະບໍ່ມີຄ່າວິຊາການໃດໆ (ຟຣີ). ຢ່າງໃດກໍ່ຕາມ, ກໍລະນີທີ່ ສະມາຄົມ ແລະ ມູນນິທິ ທີ່ເປັນຜູ້ມຸ້ງຫວັງ ເຊີນຜູ້ໃຫ້ຄຳປຶກສາໄປ ພົບເຊິ່ງໜ້າ ທີ່ມີການເດີນທາງໄປ ຈາກບ່ອນຢູ່ຂອງຕົນ ແລະ ຄ້າງຄືນ. ຜູ້ທີ່ເຊີນໄປ ຕ້ອງໄດ້ປະກອບສ່ວນຄ່າໃຊ້ຈ່າຍບາງຢ່າງ ຄື ຈ່າຍຄ່າ ເດີນທາງ ໄປກັບ ແລະ ຄ່າອັດຕາກິນໃຫ້ ຕາມຈຳນວນມື້ ທີ່ໄປເຮັດວຽກດັ່ງກ່າວໃຫ້ຜູ້ໃຫ້ຄຳປຶກສາ ໂດຍອີງຕາມ ລະບຽບຂອງສະມາຄົມ ແລະ ມູນນິທິທີ່ກ່ຽວຂ້ອງ.

## 6. ຜົນຄາດວ່າຈະໄດ້ຮັບ

ສະມາຄົມ ແລະ ມູນນິທິ ໄດ້ຮັບ ບໍລິການໃຫ້ຄຳປຶກສາ ຕາມຄວາມຈຳເປັນ ຫຼື ຄວາມຕ້ອງການຂອງອົງກອນທີ່ໄດ້ເລືອກ ຫຼື ກຳນົດ, ບັນລຸຕາມຄາດໝາຍທີ່ໄດ້ຕົກລົງກັນໄວ້, ພ້ອມທັງ ອົງກອນດັ່ງກ່າວ ສາມາດແກ້ໄຂ ບັນຫາທີ່ປະເຊີນ ແລະ  ພັດທະນາອົງກອນຂຶ້ນໄປອີກລະດັບໜຶ່ງ ຕົວຢ່າງເຊັ່ນ: ຈາກບໍ່ມີນະໂຍບາຍ ກ້າວຂຶ້ນໄປມີນະໂຍບາຍ, ຈາກບໍ່ມີລະບົບກ້າວຂຶ້ນໄປມີລະບົບ, ເປັນຕົ້ນ.

## 7. ການຕິດຕໍ່

ຫາກທ່ານສົນໃຈຮັບການບໍລິການໃຫ້ຄຳປຶກສາລ້າ ຕິດຕໍ່ໄດ້ທີ່ ເບີອດແອັບ: 020 55683155 ຫຼື  ອີເມວ: ssouphon@gmail.com ໂດຍໃຫ້ທ່ານສົ່ງຄຳຕອບຂອງທ່ານ ພາຍໃຕ້ ການຕອບຄຳຖາມ 3 ຄຳຖາມທີ່ກ່າວມາ.